ສົ່ງ: ທ່ານ ຫົວໜ້າສານັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 40 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 30 OCT 2014

**ລາຍງານການເຄື່ອນໄຫວປະຈໍາອາທິດ**
**13-17/10/2014 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**
**ຂອງທະນາຄານແຫ່ງ ສປປ ລາວ**

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ ຍ້ອນ: ຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາບໍ່ດີ ເປັນຕົ້ນແມ່ນຕົວເລກດັດຊະນີພາກບໍລິການຂອງສະຫະລັດ ຫຼຸດລົງຈາກ 59,6 ໃນເດືອນ 8/2014 ເປັນ 58,6 ໃນເດືອນ 9/2014, ຍອດຂາຍສົ່ງຂອງສະຫະລັດຫຼຸດລົງຈາກ 0,4% ໃນເດືອນ 8/2014 ເປັນ -0,7% ແລະ ສິນຄ້າຄ້າງສາງຂອງສະຫະລັດ ໃນເດືອນ 08/2014 ເພີ່ມຂຶ້ນ 0,7% ທຽບເດືອນຜ່ານມາ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 01-06/10/2014 | ອາທິດນີ້ 08-14/9/2014 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2521 | 1,2701 | -1,42% |
| ເຢນ/ໂດລາ | 109,55 | 107,12 | 2,27% |
| ບາດ/ໂດລາ | 32,62 | 32,42 | 0,61% |
| ເປໂຊ/ໂດລາ | 44,92 | 44,77 | 0,34% |
| ຣູເປີຍ/ໂດລາ | 1.2213,44 | 1.2197,56 | 0,13% |
| ໂດລາສິງກະໂປ/ໂດລາ | 1,2794 | 1,2716 | 0,61% |
| ຢວນ/ໂດລາ | 6,1385 | 6,1240 | 0,24% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 5,20% ຈາກ 89,76 ໂດລາ/ບາເຣວ ມາເປັນ 85,10 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງໂລກຫຼຸດລົງ ເຫັນໄດ້ຈາກຄັງສຳຮອງນ້ຳມັນທາງການຄ້າຂອງສະຫະລັດປະຈຳອາທິດທີ 3/10/2014 ເພີ່ມຂຶ້ນ 5 ລ້ານບາເຣວ.

ລາຄາຄຳໃນຕະຫຼາດໂລກ ເພີ່ມຂຶ້ນ 3,78% ຈາກ 1.188,71 ໂດລາ/ອອນ ມາເປັນ 1.233,66 ໂດລາ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ ແລະ ປ້ອງກັນຄວາມສ່ຽງ ພາຍຫຼັງລາຄາຄຳໄດ້ຫຼຸດລົງໃນໄລຍະຜ່ານມາ ບວກກັບການອ່ອນຄ່າລົງຂອງເງິນໂດລາໃນຕະຫຼາດສາກົນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,15% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,03% ສຳລັບອັດຕາຕະຫຼາດ. ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,16% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,47% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 01-07/10/2014 | | | ອາທິດນີ້ 08-13/10/2014 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.037,38 | 8.069,33 | 8.055,34 | 8.024,60 | 8.057,87 | 8.042,97 | 0,16% | 0,14% | 0,15% |
| ບາດ | 248,00 | 249,16 | 248,70 | 248,21 | 249,32 | 249,09 | -0,08% | -0,07% | -0,16% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.037,47 | 8.075,20 | 8.056,33 | 8.034,53 | 8.072,93 | 8.053,73 | 0,037% | 0,03% | 0,03% |
| ບາດ | 249,52 | 251,13 | 250,33 | 248,19 | 250,13 | 249,16 | 0,53% | 0,40% | 0,47% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,001% | 0,07% | 0,01% | 0,12% | 0,19% | 0,13% | | | |
| ບາດ | 0,61% | 0,79% | 0,65% | -0,01% | 0,33% | 0,03% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ຫຼຸດລົງ 0,15% ທຽບໃສ່ວັນທີ 10/10/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 75,91%.
- ປະລິມານເງິນ $M_2$ ເພີ່ມຂຶ້ນ 0,02% ເມື່ອທຽບໃສ່ວັນທີ 10/10/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 23,28%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດນີ້ (ວັນທີ 07-13/10/2014) ເຫັນວ່າ ທທກ ຊື້ໂດລາສຸດທິ 6,96 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 21,74 ລ້ານໂດລາ ແລະ ຂາຍໂດລາໄດ້ 14,79 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 318,70 ລ້ານບາດ (ໃນນີ້ ຊື້ບາດໄດ້ 240,56 ລ້ານບາດ ແລະ ຂາຍບາດໄດ້ 559,26 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 69,48% ແຕ່ເພີ່ມຂຶ້ນ 5,85% ສຳລັບເງິນບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍ ເງິນໂດລາມີ ຈຳນວນ 3,70 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 33,10 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 5,31 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 624 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈຳນວນ 50,34 ລ້ານໂດລາ ແຕ່ບໍ່ມີການຊື້-ຂາຍເງິນບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດຜ່ານມາ 30/09-06/10/2014 | | ອາທິດນີ້ 07-13/10/2014 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 20,47 | 108,96 | 9,57 | 78,85 | -53,24% | -27,63% |
| - ທ/ຄທຸລະກິດອື່ນໆ | 21,19 | 111,84 | 12,17 | 161,70 | -42,54% | 44,58% |
| ລວມຊື້: | 41,66 | 220,80 | 21,74 | 240,56 | -47,80% | 8,95% |
| 2. ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 17,05 | 161,96 | 6,34 | 152,82 | -62,79% | -5,64% |
| - ທ/ຄທຸລະກິດອື່ນໆ | 60,98 | 372,84 | 8,44 | 406,43 | -86,15% | 9,01% |
| ລວມຂາຍ: | 78,03 | 534,80 | 14,79 | 559,26 | -81,05% | 4,57% |
| ຊື້-ຂາຍສຸດທິ ທທກ | -36,37 | -313,99 | 6,96 | -318,70 | -119,13% | 1,50% |
| ຜິດດ່ຽງ ຊື້-ຂາຍ | -87,31 | -142,21 | 31,99 | -132,49 | 119,41% | 972,03% |
| ມູນຄ່າການຊື້-ຂາຍ | 119,69 | 755,60 | 36,53 | 799,81 | -69,48% | 5,85% |
| 3. ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,20 | 0,00 | 1,20 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 1,78 | 150,00 | 6,51 | 624,00 | | |
| ຊື້-ຂາຍສຸດທິ ທຫລ | -1,58 | -150,00 | -5,31 | -624,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 20,58 | 101,95 | 3,70 | 33,10 | | |
| 5. ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,60 | 0,00 | 50,39 | 0,00 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,08 | 0,00 | 0,05 | 0,00 | | |
| ຊື້-ຂາຍສຸດທິ ທຫລ | 0,53 | 0,00 | 50,34 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ ປະຈຳເດືອນ 10/2014 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 3,19% ເພີ່ມຂຶ້ນ 0,14% ຈາກ 3,05% ໃນເດືອນ 9/2014.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 29,73 ລ້ານໂດສະຫະລັດທຽບເທົ່າ, ເພີ່ມຂຶ້ນ 524,19% ທຽບໃສ່ອາທິດຜ່ານມາ. ໄດ້ອອກໃບຢັ້ງຢືນການນຳເຂົ້າທຶນຜ່ານລະບົບທະນາຄານຂອງບໍລິສັດລົງທຶນຕ່າງປະເທດ ຈຳນວນ 20 ບໍລິສັດ ເປັນຈຳນວນ 102,11 ລ້ານໂດລາສະຫະລັດ. ນອກຈາກນັ້ນ, ຍັງໄດ້ລົງຕິດຕາມ

ກວດກາຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນໍາໃຊ້ເງິນກີບ ຢູ່ເມືອງຊະນະຄາມ ແລະ ເມືອງວັງວຽງ ແຂວງວຽງຈັນ ໃນວັນທີ 13-18 ຕຸລາ 2014; ໄດ້ລົງເຄື່ອນໄຫວຕິດຕາມກວດກາການຄິດລາຄາສິນຄ້າ ແລະ ຄ່າບໍລິການ ຮ່ວມກັບຄະນະຊີ້ນໍາບັງຄັບປະຕິບັດລະບຽບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນໍາໃຊ້ເງິນກີບ ຢູ່ໃນບຸນອອກພັນສາປະວໍລະນາ ແລະ ບຸນຊ່ວງເຮືອ, ສືບຕໍ່ນໍາເອົາແຈ້ງການກ່ຽວກັບການຄິດລາຄາສິນຄ້າ ແລະ ຄ່າບໍລິການເປັນເງິນກີບ ຂອງພະແນກອຸດສາຫະກໍາ ແລະ ການຄ້າ ນະຄອນຫຼວງວຽງຈັນ, ກະຊວງອຸດສາຫະກໍາ ແລະ ການຄ້າ ລົງໂຄສະນາໃຫ້ກັບບັນດາຫ້າງຮ້ານຕ່າງໆໃນຂອບເຂດເມືອງສີສັດຕະນາກ.

**2.6 ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 733 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 59% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 405,73 ຕື້ກີບ ເພີ່ມຂຶ້ນ 65,54% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) (10-16/10/2014) ມີຈໍານວນ 1.082 ຄັ້ງ ໂດຍມີມູນຄ່າ 283,03 ຕື້ກີບ ເພີ່ມຂຶ້ນ 40,6% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 346 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.422,88 ຈຸດ ເພີ່ມຂຶ້ນ 1,24% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 171.180 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,23 ຕື້ກີບ ເພີ່ມຂຶ້ນ 168,76% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍ ສະເລ່ຍກວມເອົາ 68,59% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.749 ກີບ ຫຼຸດລົງ 21 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 40.553 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 314,26 ລ້ານກີບ ຫຼຸດລົງ 17,88% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 62,47% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,40%[2].

ຮຸ້ນຂອງບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.015 ກີບ ເພີ່ມຂຶ້ນ 264 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 130.517 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 915,57 ລ້ານກີບ ເພີ່ມຂຶ້ນ 1.116,91% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ສະເລ່ຍກວມເອົາ 66,74% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,24%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.200 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 110 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,90 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ສະເລ່ຍກວມເອົາ 75% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,71%[4].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສໍາເລັດການປັບປຸງອັດຕາດອກເບ້ຍເງິນຝາກຂອງ ທຫລ ສະກຸນເງິນບາດ ແລະ ໂດລາ;
- ສໍາເລັດການຈັດກອງປະຊຸມສໍາມະນາ ໃຫ້ແກ່ການນໍາຂອງຂະແໜງການກ່ຽວຂ້ອງໃນ ສປປ ລາວ ກ່ຽວກັບບົດຮຽນໃນການພັດທະນາຕະຫຼາດທຶນ ຂອງ ສປ. ຈີນ ແລະ ເຮັດວຽກຮ່ວມກັບ ຄຄຊ ສປ. ຈີນ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດຂອງ ແມ່ນບໍ່ມີກໍານົດ.

- ສໍາເລັດການຈັດກອງປະຊຸມ: ❶ ກອງປະຊຸມປຶກສາຫາລື ປະຈໍາໄຕມາດ III ແລະ ແຜນໄຕມາດ IV ລະຫວ່າງກົມຄຸ້ມຄອງສະຖາບັນການເງິນ ກັບກຸ່ມສະມາຄົມການເງິນຈຸລະພາກ ທີ່ຫ້ອງປະຊຸມຊັ້ນ 07, ❷ ກອງປະຊຸມປຶກສາຫາລື ເພື່ອກະກຽມການເຊື່ອມໂຍງຂອງຂະແໜງການທະນາຄານໃຫ້ແກ່ວຽກງານ AEC 2015 ແລະ ການເປັນເຈົ້າພາບກອງປະຊຸມ 2016 ພາຍໃຕ້ການເປັນປະທານຂອງ ທ່ານ ຜູ້ວ່າການ ທຫລ, ❸ ກອງປະຊຸມປຶກສາຫາລືພາຍໃນລະຫວ່າງກົມກ່ຽວຂ້ອງ ເພື່ອກະກຽມເຮັດວຽກກັບຄະນະທີມງານປະເມີນຜົນເສດຖະກິດມະຫາພາກ ຂອງ IMF;
- ສໍາເລັດການເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມສໍາມະນາໃນຫົວຂໍ້: "ບົດຮຽນຂອງປະເທດ ສປ. ຈີນ ກ່ຽວກັບການພັດທະນາຕະຫຼາດທຶນ" ທີ່ສໍານັກງານ ຄຄຊ, ❷ ກອງປະຊຸມ IMF/WB ປະຈາປີ 2014 ທີ່ນະຄອນຫຼວງວໍຊິງຕັນ ດີຊີ, ປະເທດ ສ. ອາເມລິກາ;
- ສໍາເລັດການຂໍອະນຸມັດວີຊາ, ບັດອະນຸຍາດພັກເຊົາຊົ່ວຄາວໃຫ້ແກ່ Mr Axel Gruber ຊ່ຽວຊານການເງິນຈຸລະພາກປະຈໍາເມືອງວິລະບູລີ ແຂວງສະຫວັນນະເຂດ;
- ສໍາເລັດການໄປຖອດຖອນບົດຮຽນກ່ຽວກັບລະບົບ AML/CFT System (ICBC) ຢູ່ທະນາຄານອຸດສາຫະກໍາ ແລະ ການຄ້າ ທີ່ ສປ ຈີນ;
- ສໍາເລັດການລົງກວດກາເຄື່ອນໄຫວວຽກງານຂອງກົມເງິນຕາ 2013 ແລະ 6 ເດືອນຕົ້ນປີ 2013.

III. ***ແຜນວຽກຈຸດສຸມອາທິດຕໍ່ໄປ:***

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າປັບປຸງອັດຕາດອກເບ້ຍເງິນຝາກປະຈໍາຂອງ ທຫລ ສະກຸນເງິນບາດ ແລະ ໂດລາ;
- ສືບຕໍ່ຄົ້ນຄວ້າຕໍ່ຄໍາຮ້ອງຟ້ອງຂອງລູກຄ້າ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ເອກພັດທະນາ ຕໍ່ກັບການຄິດໄລ່ອັດຕາດອກເບ້ຍເງິນກູ້ຂອງສະຖາບັນ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າຮ່າງບົດບັນທຶກຊ່ວຍຈໍາລະຫວ່າງໜ່ວຍງານ AMLIU ກັບກົມພາສີກະຊວງການເງິນ, ກົມຕໍາຫຼວດເສດຖະກິດ ກະຊວງປ້ອງກັນຄວາມສະຫງົບ ແລະ ໜ່ວຍງານຕ້ານການຟອກເງິນ ປະເທດກໍາປູເຈຍ; ❷ ຄົ້ນຄວ້າ ແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້ານິຕິກໍາລຸ່ມກົດໝາຍ ເພື່ອນໍາສະເໜີຂັ້ນເທິງ, ❸ ຄົ້ນຄວ້າ ກ່ຽວກັບການສ້າງລະບົບຕ້ານການຟອກເງິນທີ່ທັນສະໄໝ ໂດຍສະເພາະແມ່ນລະບົບ IT;
- ສືບຕໍ່ປະຕິບັດວຽກງານຂາຍສິດນໍາໃຊ້ທີ່ດິນ 2 ຟາກຖະໜົນວຽງຈັນ 450 ປີ.

ເງິນແທນ ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ສຸກັນ ຈັນທະວົງ